**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 29 ມິຖຸນາ 2008 (6-29-2008)**

# ຖ້າເງິນຂອງທ່ານຫາກເວົ້າໄດ້

**ຂໍ້ພຣະຄັມພີໃນບົດຮຽນ:** ສຸພາສິດ 3:9-10; 11:24-26; 3:11; 15:16-17; 16:11; 23:4-5

**ພຣະຄັມພີແຫ່ງຄວາມຈິງ:** ໄພ່ພົນຂອງພຣະເຈົ້າຕ້ອງຖວາຍກຽດແດ່ພຣະຜູ້ເປັນເຈົ້າໃນທາງທີ່ພວກເຂົາຄິດກ່ຽວກັບເງິນ, ຫາເງິນ, ແລະໄຊ້ເງິນຂອງພວກເຂົາ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃນການໃຊ້ສະຕິປັນຍາຈາກເບື້ອງເທິງໃນຊີວິດປະຈຳວັນຂອງທ່ານໂດຍ:

- ການກວດສອບໃສ່ຫລັກການຂອງພຣະຄັມພີກ່ຽວກັບການຫາແລະການໃຊ້ເງິນທີ່ຖືກຕ້ອງ; ແລະ
- ການເລືອກເອົາທາງທີ່ຈະໃຫ້ທ່ານໃຫຍ່ຂຶ້ນໃນການຖວາຍກຽດແດ່ພຣະຜູ້ເປັນເຈົ້າກັບເຣື່ອງເງິນຂອງທ່ານ.

## ນິສັຍກ່ຽວກັບເຣື່ອງເງິນຂອງຂ້າພະເຈົ້າເປີດເຜີຍຫຍັງແດ່ກ່ຽວກັບຊີວິດແລະຄວາມເຊື່ອ?

ຂ້າພະເຈົ້າກໍຍັງງົງຢູ່ທີ່ເຣື່ອງເງິນກໍເປັນອີກເຣື່ອງນຶ່ງຂອງທຳນຽມທີ່ບໍ່ສາມາດເວົ້າສູ່ກັນຟັງໄດ້. ຂນະທີ່ກຳລັງນັ່ງເຄື່ອງບິນຕິດກັບຄົນທີ່ບໍ່ຮູ້ຈັກກັນມາກ່ອນ, ຂ້າພະເຈົ້າກໍໄດ້ເວົ້າເຣື່ອງຄອບຄົວ, ເຣື່ອງຂອງຄວາມເຊື່ອຖືຝ່າຍວິນຍານ, ເຣື່ອງຄຸນຄ່າຂອງຊີວິດ, ແລະລວມທັງເຣື່ອງການເມືອງທີ່ຂ້າພະເຈົ້າເຫັນດີເຫັນຊອບນຳ. ເຖິງປານນັ້ນຂ້າພະເຈົ້າກໍບໍ່ເຫັນຜູ້ໃດທີ່ນັ່ງຢູ່ໃກ້ຖາມເຖິງ, "ເຈົ້າຫາເງິນໄດ້ຫລາຍປານໃດຕໍ່ປີ?" ຂ້າພະເຈົ້າກໍປລາດໃຈທີ່ຄົນຈະກ້າເວົ້າເຣື່ອງເພດສຳພັນຂອງພວກເຂົາກ່ອນໆທີ່ຈະເວົ້າເຣື່ອງລາຍໄດ້ປະຈຳປີ.

ຂນະທີ່ພວກເຮົາບໍ່ຢາກເວົ້າກ່ຽວເຣື່ອງເງິນຂອງພວກເຮົາ, ມັນກໍເປົ່ງສຽງອັນດັງກ່ຽວກັບພວກເຮົາເອງ. ພວກເຮົາຄິດແນວໃດ, ຫາມັນແນວໃດ, ແລະແບ່ງປັນກັບຄົນອື່ນແນວໃດມັນກໍເປີດເຜີຍຄຸນຄ່າແທ້ຈິງຂອງຊີວິດພວກເຮົາ. ເພາະວ່າມັນເປັນພື້ນຖານແລະເປັນພາກສ່ວນຂອງຊີວິດ, ພຣະຄຳຂອງພຣະເຈົ້າມີຄຳແນະນຳທີ່ປະເສີດທີ່ສຸດກ່ຽວເຣື່ອງເງິນ. ຂນະທີ່ພວກເຮົາກຳລັງຊອກຫາສະຕິປັນຍາຈາກພຣະຄັມພີກ່ຽວເຣື່ອງການເງິນ, ພວກເຮົາສາມາດດຳຣົງຊີວິດໃນທາງທີ່ຖວາຍກຽດແກ່ພຣະເຈົ້າ.

## ສຶກສາພຣະຄັມພີ

### 1. ກວດກາເບິ່ງຊີວິດຝ່າຍວິນຍານຂອງທ່ານຢ່າງສມ່ຳສເມີ (ສຸພາສິດ 3::9-10; 15:16-17)

ພຣະເຈົ້າເປັນເຣື່ອງຈິງຂອງທ່ານແທ້ບໍ່? ຄຳຕອບທີ່ຈະຂຶ້ນຢູ່ກັບການຊອກຫາທາງ**ຖວາຍກຽດແດ່ພຣະຜູ້ເປັນເຈົ້າ**. ຕົ້ນຕໍອັນທຳອິດແມ່ນພວກເຮົາເຣັດຜ່ານວັດຖຸສິ່ງຂອງທີ່ເປັນຂອງພວກເຮົາ. ໃນຂນະທີ່ພຣະທັມສຸພາສິດເວົ້າເຖິງ "ໂລກຕົວຈິງ," ມັນກໍບໍ່ໄດ້ລົດຄຸນຄ່າໃນການສະແດງໃຫ້ເຫັນເຖິງຄວາມເຊື່ອຂອງຈິດວິນຍານ. ຂໍ້ທີ 9 ກ່າວເຖິງໝາກຜົນໜ່ວຍທຳອິດ, ຊຶ່ງເປັນບ່ອນດຽວເທົ່ານັ້ນໃນພຣະທັມສຸພາສິດທີ່ກ່າວເຖິງກົດບັນຍັດໃນພາກພຣະສັນຍາເດີມ. ໂມເຊໄດ້ອອກຄຳສັ່ງໃຫ້ພວກເຮັບເຣີຖວາຍໝາກຜົນທຳອິດໃຫ້ແກ່ພຣະເຈົ້າ(ອົບພະຍົບ 23:19; 34:26).

ຂ້າພະເຈົ້າໄດ້ຍິນນັກເທດຄົນນຶ່ງເທສນາເຣື່ອງ "ຂອງເສດເຫລືອສຳລັບພຣະເຈົ້າ." ເປົ້າໝາຍຂອງລາວກໍແມ່ນວ່າສ່ວນຫລາຍແລ້ວສິ່ງທີ່ພວກເຮົາເອົາຖວາຍໃຫ້ກັບພຣະເຈົ້າແມ່ນຂອງທີ່ເຫລືອ, ຖ້າມີສິ່ງໃດ, ກໍແມ່ນເຫລືອຈາກຂອງທີ່ພວກເຮົາຈ່າຍສຳລັບພວກເຮົາເອງກ່ອນ. ເຣື່ອງທີ່ເກີດຂຶ້ນເລື້ອຍໆກໍແມ່ນເຣື່ອງເງິນນີ້ເອງ. ເມື່ອພວກເຮົາ

ເອົາພຣະເຈົ້າກ່ອນສິ່ງອື່ນໃດໝົດ, ພຣະອົງກໍຈະອວຍພອນໃຫ້ແກ່ພວກເຮົາ. ພາກສ່ວນນຶ່ງຂອງການຖວາຍກຽດແກ່ພຣະເຈົ້ານັ້ນກໍຄືການມອງໃຫ້ເຫັນວ່າເງິນມັນສາມາດເຮັດຫຍັງໄດ້ແດ່. ທ່ານເຄີຍພິຈາຣະນາວ່າເງິນສາມາດຊື້ຫຍັງໄດ້ແດ່? ມັນສາມາດຊື້ໂມງໄດ້, ແຕ່ວ່າມັນບໍ່ສາມາດຊື້ເວລາໄດ້. ມັນສາມາດຊື້ເຮືອນໄດ້, ແຕ່ບໍ່ສາມາດຊື້ຄອບຄົວໄດ້. ສຳຄັນກວ່າໝູ່ທີ່ສຸດຄື, ພວກເຮົາຕ້ອງເຂົ້າໃຈສາຍສຳພັນຂອງພວກເຮົາກັບພຣະເຈົ້າວ່າມັນສຳຄັນກ່ວາເງິນໝົດທັງໂລກ.

ຫລາຍໆຄົນຍິນຍອມທີ່ຈະເຮັດທຸກຢ່າງເພື່ອຕິດຕາມຊັບສົມບັດແມ່ນວ່າຈະສູນເສັຍຄອບຄົວອັນແສນເພງຂອງພວກເຂົາ, ບາງຄັ້ງກໍສູນເສັຽແມ້ກະທັ້ງ**ຄາບເຂົ້າ**ຂອງຄອບຄົວພວກເຂົາດ້ວຍ. ວັດຖຸສິ່ງຂອງໃນເຮືອນຊານມັນນຳ**ບັນຫາ**ມາສູ່ພວກເຮົາກ່ອນໝູ່ໝົດ, ບາງຄັ້ງຄາວກໍນຳໄປສູ່**ຄວາມຄຽດຊັງ**. ພວກເຮົາສະແດງຄວາມໄວ້ວາງໃຈໃນພຣະເຈົ້າເມື່ອພວກເຮົາຫາກເອົາຄວາມຮັກຕໍ່ຄອບຄົວໃຫ້ເປັນນຳ້ເບີນຶ່ງທີ່ເໜືອສິ່ງຂອງຕ່າງໆທີ່ພວກເຮົາມີຢູ່.

## ໒. <u>ຢ່າຕົກໃນຫລຸມຮັກຂອງເງິນ</u> (ສຸພາສິດ ໒໓:4-5)

ພາບພົດອັນນຶ່ງທີ່ໜ້າເສົ້າສລົດໃຈທີ່ເຫັນຄົນເຕັມໃຈອອກເຫື່ອເທແຮງຈົນອ່ອນເພັຽເພື່ອພວກເຂົາຈະ**ລວຍ**. ຄົນຜູ້ນີ້ຈະໃຊ້ເວລາຫລາຍຊົ່ວໂມງລົງທຶນໃສ່ທຸຣະກິດບາງຢ່າງ ແລ້ວລາວກໍຫວັງຈະເກັບເອົາເງິນໂດລາທີ່ລົມພັດຕົກລົງມາ. ແຕ່ວ່າ, ເມື່ອເວົ້າເຖິງເຣື່ອງຈິດວິນຍານພຽງໜ້ອຍດຽວກໍບອກວ່າມັນເສັຍເວລາ. ພາກສ່ວນທີ່ເສົ້າສລົດໃຈຂອງການທຸ້ມເຫື່ອເທແຮງແລະການເງິນທີ່ໄດ້ມາຂອງຜູ້ນັ້ນມັກຈະສູນເສັຽໄປ. ແຜນການຫລອກລວງໃຫ້ຮັ່ງມີແບບວ່ອງໄວຫລາຍໆແບບລ້ວນແລ້ວແຕ່ເຮັດໃຫ້ຜູ້ເປັນເຈົ້າຂອງຕ້ອງໝົດເນື້ອໝົດຕົວ(ສຸພາສິດ ໒໘:໒໒).

ມີບາງຄົນໄດ້ເວົ້າວ່າດັ່ງນີ້, "ຖ້າເງິນຫາກເວົ້າໄດ້, ມັນກໍຈະເວົ້າກັບຂ້ອຍວ່າ ລາໄປກ່ອນເດີ!" ຄວາມຮັ່ງມີທີ່ມະນຸດຕິດຕາມຫານັ້ນເບິ່ງເໝືອນວ່າມັນປົ່ງ**ປີກ**ແລະກໍບິນໄປເໝືອນ**ນົກອິນຊີໃນຟ້າອາກາດ**. ມີຈັກຄົນແດ່ທີ່ຟູຂຶ້ນສູງສຸດໃນຄວາມຮັ່ງມີໃນຊ່ວງເວລາພຽງສັ້ນໆ, ຄວາມມັ່ງຄັ່ງຫາຍໄປ, ແລະໃນຊົ່ວພິບຕາດຽວກໍບໍ່ມີຫຍັງເຫລືອ(ສຸພາສິດ 11:໒໘)? ແຕ່ວ່າ, ສ່ວນຫລາຍແລ້ວສິ່ງທີ່ຍັງເຫລືອຢູ່ຈາກການຕິດຕາມວັດຖຸສິ່ງຂອງນັ້ນກໍບໍ່ສາມາດຕັດສິນໃຈໄດ້. ການຊອກຫາຄວາມມັ່ງຄັ່ງຮັ່ງມີກໍເຫລືອໄວ້ແຕ່ຄວາມຂັດແຍ້ງໃນຄອບຄົວ(ສຸພາສິດ ໒໘:໒5).

ແທນທີ່ຈະເອົາຕາຂອງພວກເຮົາຈົດຈໍ່ໃສ່ຄວາມຮັ່ງມີ, ພວກເຮົາຄວນຈະສຸມໃຈຕໍ່ພຣະເຈົ້າແລະແຜນການຂອງພຣະອົງສຳລັບພວກເຮົາ. ທາງນຶ່ງທີ່ຊີ້ໃຫ້ເຫັນແຈ້ງທີ່ສຸດຕໍ່ການຖວາຍກຽດແກ່ພຣະເຈົ້າຄືຜ່ານການສະແດງໃຫ້ເຫັນວ່າພຣະອົງສາມາດເຮັດໃຫ້ເຮົາເພິ່ງພໍໃຈໄດ້. ການໂລບມາກມີຜົນທີ່ກົງກັນຂ້າມ ມັນບອກວ່າໃຫ້ມອງເບິ່ງໂລກນີ້, "ພຣະເຈົ້າບໍ່ສາມາດທີ່ຈະນຳຄວາມຍິນດີມາສູ່ຫົວໃຈຂອງຂ້ອຍໄດ້ດອກ. ຂ້ອຍຕ້ອງໃຫ້ມີຫລາຍກວ່ານີ້ອີກ." ນີ້ແມ່ນຄວາມຈິງຂອງການໂລບມາກໂລພາ, ຢາກໄດ້ຫລາຍຕື່ມ.

## 3. <u>ຫາເງິນທຸກໆເຊັນດ້ວຍຄວາມສັດຊື່</u> (ສຸພາສິດ 13:11; 16:11)

ໃນຊີວິດນີ້ມີວິທີການຫາເງິນຫລາຍທາງ, ແຕ່ວ່າບໍ່ແມ່ນທຸກໆທາງທີ່ນຳພຣະກຽດມາສູ່ພຣະເຈົ້າຜູ້ທີ່ສ້າງມະນຸດໃຫ້ມີພື້ນຖານທາງສິນທັມ. ຢ່າດຳຣົງຊີວິດທີ່ຂາດຈາກຄວາມສັດຊື່ແລະຂາດສິນທັມ. ບາງຄົນຊອກຫາ**ຄວາມຮັ່ງມີ**ໂດຍ**ການຕົວະຕົ້ມ**. ໃນຄວາມຄິດຂອງພວກເຂົາຄືຕອນສຸດທ້າຍກໍຈະສເວີຍສຸກ, ແຕ່ວ່າຕອນສຸດທ້າຍຂອງພວກເຂົາມີແຕ່**ລົດນ້ອຍຖອຍລົງ**. ໃນດ້ານນຶ່ງອີກ, ໄພ່ພົນຂອງພຣະເຈົ້າສ້າງຄວາມຮັ່ງມີຂອງພວກເຂົາຜ່ານການ**ອອກເຫື່ອແຮງ**ທີ່ສັດຊື່. ຄ່າຈ້າງຂອງມື້ນຶ່ງກໍພໍເໝາະກັບການເຮັດວຽກງານເຕັມມື້ຂອງວັນນັ້ນ.

ພາກສ່ວນນຶ່ງຂອງ**ຄວາມສັດຊື່**ໃນການຕິດຕາມຄວາມຮັ່ງມີແມ່ນລວມທັງການແລກປ່ຽນຊື້ຂາຍທີ່ຍຸດຕິທັມ. **ຄວາມກ້ຳເກິ່ງ**ແມ່ນໃຊ້ຕາມຕລາດເພື່ອແລກປ່ຽນເງິນກັບສິນຄ້າ. ຄວາມ**ເປັນຫ່ວງໃຍ**ຂອງພຣະເຈົ້າແມ່ນຈຳນວນສິນຄ້າທີ່**ສັດຊື່**ແລ້ວແລກປ່ຽນໃຫ້ສົມກັບເງິນນັ້ນ. ພຣະເຈົ້າຍັງມີພຣະປະສົງຢ່າງເດີມໃນທຸກວັນນີ້. ທຸຣະກິດຫ້າງຮ້ານ

ບໍ່ວ່ານ້ອຍຫລືໃຫຍ່, ຕ້ອງປະຕິບັດຢ່າງຍຸດຕິທັມຕໍ່ລູກຈ້າງ, ຕໍ່ລູກຄ້າ, ແລະຕໍ່ທຸຣະກິດອື່ນໆ.

ແຕ່ກໍຫນ້າເສັຽໃຈ, ທີ່ຍັງມີບ່ອນເຮັດວຽກຫລາຍໆແຫ່ງຍັງມີການຫລອກຕົ້ມກັນຢູ່. ການທຳສັນຍາວ່າຈະສົ່ງໃຫ້ຕົງເວລາ ເມື່ອບໍ່ໃສ່ໃຈທີ່ຈະເຮັດຕາມນັ້ນກໍເປັນການຜິດ. ລູກຈ້າງບາງຄົນກໍຕົວະວ່າເຮັດວຽກເຕັມຊົ່ວໂມງ ນັ້ນກໍບໍ່ຖືກຕ້ອງ. ການຄ້າຂາຍພົນສຳເຣັດແບບນີ້ແມ່ນຕຽມຕົວສູ່ຄວາມຫາຍຍະນະ(ສຸພາສິດ 21:6). ພຣະເຈົ້າບໍ່ຮັບຮູ້ສິ່ງເຫລົ່ານີ້, ແລະແນ່ນອນທີ່ສຸດເລີຍ ແມ່ນແຕ່ລູກຄ້າແລະນາຍຈ້າງທຸກໆຄົນກໍບໍ່ເພິ່ງປາຖນາເຫມືອນກັນ.

**4. <u>ໃຫຍ່ຂຶ້ນໃນຄວາມເອື້ອເຟື້ອເຜື່ອແຜ່</u>** (ສຸພາສິດ 11:24-26)

ມີບາງຄົນໄດ້ກ່າວເອົາໄວ້ວ່າດັ່ງນີ້, "ຂ້ອຍເຄີຍຂາດເງິນມາກ່ອນ, ແຕ່ວ່າຂ້ອຍບໍ່ເຄີຍຍາກຈົນ." ຂ້າພະເຈົ້າຄິດວ່າຄົນຜູ້ນັ້ນຢາກຈະບອກວ່າຄວາມທຸກຈົນເປັນພຽງແຕ່ຄວາມຄິດ ບໍ່ຂຶ້ນຢູ່ກັບວ່າລາວມີເງິນຫລາຍເທົ່າໃດ. ຄົນທີ່ຊ່ວຍຄົນຍາກຈົນຢ່າງເອື້ອເຟື້ອເຜື່ອແຜ່ແມ່ນຮັ່ງມີຢ່າງແທ້ຈິງແລະພຣະເຈົ້າຈະອວຍພອນຄົນຢ່າງນັ້ນ. ນັ້ນແມ່ນກຸນແຈຂອງການມີນິສັຍແລະເປົ້າຫມາຍທີ່ຖືກຕ້ອງ.

ພວກເຮົາສາມາດຮັບເອົາການ "ແບມື" ຫລື "ກຳກ່ຳປັ້ນ "ຕໍ່ນິສັຍກ່ຽວກັບຄວາມເອື້ອເຟື້ອເຜື່ອແຜ່. ຜູ້ທີ່ເອົາໃຫ້ຢ່າງບໍ່ຫວັງເອົາຄືນຈະໄດ້ເພີ້ມຕື່ມ; ຜູ້ທີ່ເອົາໃຫ້ແບບຫວງໄວ້ຈະກາຍເປັນຄົນທຸກໃນຫລາຍໆລະດັບ. ອັນນີ້ບໍ່ແມ່ນຂ່າວປະເສີດທີ່ເຮັດໃຫ້ຮັ່ງມີທີ່ສອນໃຫ້ຄົນຖວາຍແລ້ວຝ່າຍການເງິນຈະດີຂຶ້ນ. ແຕ່ວ່າມັນກໍເຮັດໃຫ້ເຫັນຄວາມແຕກຕ່າງທັງສອງຝ່າຍທີ່ສອນຄົນທີ່ເອື້ອເຟື້ອເຜື່ອແຜ່ວ່າຈະເປັນຄົນມັ່ງມີເປັນດີກວ່າ. ນີ້ເປັນຄຳບັນລະຍາຍທີ່ດີທີ່ສຸດ: ຜູ້ທີ່ເອົານ້ຳໃຫ້ຄົນອື່ນດື່ມກໍຈະໄດ້ນ້ຳຄືນອີກ. ການມັ່ງມີເປັນດີຢ່າງນີ້ບາງທີກໍເປັນຜົນຈາກການທີ່ບໍ່ເຫັນແກ່ຕົວ. ບາງທີມັນອາດຈະນຳສັນຕິສຸກມາສູ່ຈິດໃຈເມື່ອໄດ້ຊ່ວຍຄົນອື່ນທີ່ຕ້ອງການຄວາມຊ່ວຍເຫລືອ. ພວກເຮົາສາມາດໄວ້ວາງໃຈທີ່ພຣະເຈົ້າຈະປະທານລາງວັນອັນເຫມາະສົມແກ່ຜູ້ທີ່ຊ່ວຍຄົນອື່ນໆດ້ານການເງິນ(ສຸພາສິດ 19:17).

ຄວາມເອື້ອເຟື້ອເຜື່ອແຜ່ນີ້ຈະບໍ່ປາກົດໃຫ້ເຫັນເດັ່ນຊັດຈາກລະດັບສ່ວນບຸກຄົນ. ພວກທີ່ມີຄວາມເຊື່ອທີ່ສລາດຊອກຫາທາງເພື່ອຊ່ວຍຄົນອື່ນໆໂດຍຜ່ານທາງທຸຣະກິດຂອງພວກເຂົາ. ຜູ້ທີ່ຂາຍເຂົ້າຂອງຕົນເພື່ອຊ່ວຍຄົນອື່ນ(ຈະເປັນທຸຣະກິດຈຳນ່າຍສິນຄ້າຫລືການຮັບໃຊ້)ຈະພົບພຣະພອນຂອງພຣະເຈົ້າຕໍ່ການກະທຳນັ້ນ. ແຕ່ວ່າ, ນິສັຍຂີ້ຖີ່ກໍຈະບໍ່ເປັນທີ່ພໍພຣະທັຍພຣະຜູ້ເປັນເຈົ້າໃນທີ່ທຳງານຫລືແມ້ກະທັ້ງຢູ່ທີ່ເຮືອນຊານ.

## ບົດຮຽນຊີວິດ

ພວກເຮົາຮັບໃຊ້ພຣະເຈົ້າອົງຊົງຣິດ-ບໍ່ແມ່ນຮັບໃຊ້ເງິນໂດຣາ. ເງິນສາມາດຊ່ວຍນຳເອົາສິ່ງທີ່ຈຳເປັນສຳລັບຊີວິດນີ້ມາໃຫ້, ແຕ່ພຣະເຈົ້າປະທານຄວາມຕ້ອງການຂອງຊີວິດນີ້ແລະປະທານຊີວິດອັນຕລອດໄປເປັນນິດສຳລັບຂັ້ນຕໍ່ໄປ. ດັ່ງນັ້ນ, ພວກເຮົາຄວນຊອກຫາທາງທີ່ຈະຖວາຍກຽດຕໍ່ພຣະອົງໃນດ້ານການເງິນຂອງພວກເຮົາ.

ທີ່ຈະເຮັດສິ່ງເຫລົ່ານີ້ໄດ້, ມັນມີຫລັກການພື້ນຖານທີ່ພວກເຮົາຕ້ອງຮຽນຮູ້ແລະມີຄຳຖາມທີ່ເຫມາະສົມທີ່ພວກເຮົາຕ້ອງຖາມຕົວເຮົາເອງກ່ອນ.

- ພຣະເຈົ້າແມ່ນພຣະຜູ້ເປັນເຈົ້າເຫນືອຊີວິດທັງປວງ, ລວມທັງກະເປົາເງິນຂອງພວກເຮົາດ້ວຍ: ເຮົາໄດ້ອະນຸຍາດໃຫ້ພຣະອົງຝຶກຫັດສິດທິຂອງພຣະອົງໃນການຄວບຄຸມເຫນືອເງິນຂອງເຮົາບໍ່?
- ຖ້າຫາກຕິດຕາມຄວາມຮັ່ງມີພວກເຮົາກໍເປັນຄົນທີ່ບໍ່ສລາດເພາະວ່າ, ບໍ່ເຫມືອນກັບການຕິດຕາມພຣະເຈົ້າ, ມັນນຳຜົນເສັຽຫາຍມາສູ່ພວກເຮົາຫລາຍກວ່ານຳຜົນດີມາສູ່: ເຮົາໄດ້ອະນຸຍາດໃຫ້ເງິນທຳລາຍສິ່ງທີ່ເຮົາຮັກນັ້ນຫລືບໍ່?
- ພຣະຄັມພີຍົກຍ້ອງສັຣເສີນການອອກເຫື່ອເຫແຮງຢ່າງສັດຊື່ແລະສາບແຊ່ງຕໍ່ຄວາມຮັ່ງມີທີ່ໄດ້ມາຈາກການ

ບໍ່ສັດຊື່: ເຮົາເຮັດທຸກສິ່ງຖືກຕ້ອງຕາມກົດໝາຍແລະສັດຊື່ເພື່ອຈະໄດ້ເງິນນັ້ນມາບໍ່?

- ຜູ້ທີ່ມີຄວາມເຊື່ອຄວນຈະຊ່ວຍຜູ້ທີ່ຂັດສົນທາງດ້ານການເງິນ, ຊຶ່ງນຳປະໂຫຍດໃຫ້ແກ່ຜູ້ຂັດສົນແລະຜູ້ທີ່ເອົາໃຫ້ກໍມີເພີ້ມຕື່ມອີກໃນຊີວິດນີ້: ເຮົາແບ່ງປັນສິ່ງຂອງຕ່າງໆທີ່ພວກເຮົາມີຢູ່ໃຫ້ກັບຄົນອື່ນຫລືເຮົາຫວງແຫນມັນໄວ້?

ມີກະສັດໃນສມັຍບູຮານໄດ້ຈັດພິທີໃຫ້ພວກທະຫານຂອງຕົນບັບຕິສມາໂດຍການໃຫ້ພວກເຂົາຍ່າງຜ່ານໜອງນ້ຳຫລືແມ່ນ້ຳ. ແຕ່ວ່າ, ເຖິງແມ່ນໝົດທັງຮ່າງກາຍຂອງພວກເຂົາຈະຈົມໃນນ້ຳ, ພວກເຂົາກໍຈະຍົກດາບຂອງພວກເຂົາຂຶ້ນບໍ່ໃຫ້ຖືກນ້ຳເພາະຈະໃຊ້ດາບໃນການຂ້າຟັນລັນແທງກັນຕໍ່ໄປອີກ. ຜູ້ທີ່ເຊື່ອໃນພຣະເຈົ້າບາງຄັ້ງກໍເຮັດຢ່າງດຽວກັນນີ້ກ່ຽວກັບເລື່ອງເງິນຂອງພວກເຂົາ. ພວກເຮົາເຕັມໃຈທີ່ຈະມອບທຸກໆພາກສ່ວນຂອງຊີວິດນີ້ໃຫ້ແກ່ພຣະຄຣິດຍົກເວັ້ນໃນດ້ານການເງິນຂອງພວກເຮົາ. ໄພ່ພົນຂອງພຣະເຈົ້າຕ້ອງຖວາຍກຽດແດ່ພຣະຜູ້ເປັນເຈົ້າໃນຄວາມຄິດກ່ຽວກັບເງິນ, ການຫາເງິນ, ແລະການໃຊ້ເງິນຂອງພວກເຂົາ.

*ແມ່ນຫຍັງຄືຂັ້ນຕອນທຳອິດທີ່ທ່ານຕ້ອງເຮັດໃຫ້ບົດຮຽນນີ້ກາຍເປັນຈິງໃນຊີວິດຂອງທ່ານ?*

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by PA.